ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ 16 /ສພຂ.ສຂ

ສະຫວັນນະເຂດ, ວັນທີ 25 ກໍລະກົດ 2024

## ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍ ການຮັບຮອງເອົາ ຂໍ້ຕົກລົງຂອງທ່ານເຈົ້າແຂວງ
## ກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳຢູ່ແຂວງ ສະຫວັນນະເຂດ

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ຂໍ້ 06;
- ອີງຕາມ ໜັງສືສະເໜີ ຂອງທ່ານເຈົ້າແຂວງ ສະຫວັນນະເຂດ ເພື່ອພິຈາລະນາ ແລະ ຮັບຮອງຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳຢູ່ແຂວງ ສະຫວັນນະເຂດ ຕໍ່ກອງປະຊຸມ ສະໄໝສາມັນເທື່ອທີ 07 ຂອງສະພາປະຊາຊົນແຂວງ ຊຸດທີ II ສະບັບເລກທີ 2804/ຈຂ, ລົງວັນທີ 23 ກໍລະກົດ 2024.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ດ້ວຍຄວາມຮັບຜິດຊອບສູງ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແລະ ສະມາຊິກສະພາປະຊາຊົນແຂວງ ໃນກອງປະຊຸມ ສະໄໝສາມັນ ເທື່ອທີ 07 ຂອງສະພາປະຊາຊົນແຂວງ ຊຸດທີ II ຕໍ່ເນື້ອໃນຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳຢູ່ ແຂວງ ສະຫວັນະເຂດ.

### ກອງປະຊຸມ ຕົກລົງ:

ມາດຕາ 1 ຮັບຮອງເອົາ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳຢູ່ແຂວງ ສະຫວັນນະເຂດ ດ້ວຍຄະແນນສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາປະຊາຊົນແຂວງ ທີ່ເຂົ້າຮ່ວມກອງປະຊຸມ;

ມາດຕາ 2 ມອບໃຫ້ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການຜັນຂະຫຍາຍມະຕິສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 3 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ກົງແກ້ວ ນິວໍລະຈັກ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງສະຫວັນນະເຂດ

ເລກທີ 3158/ຈຂ
ສະຫວັນນະເຂດ, ວັນທີ 03 ກັນຍາ 2024

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຢູ່ແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍ ກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ກົດໝາຍ ວ່າດ້ວຍ ທີ່ດິນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ມະຕິຂອງກອງປະຊຸມ ສະໄໝສາມັນ ເທື່ອທີ 7 ຂອງສະພາປະຊາຊົນ ແຂວງສະຫວັນນະເຂດ ຊຸດທີ II ສະບັບເລກທີ 16/ສພຂ.ສຂ, ລົງວັນທີ 25 ກໍລະກົດ 2024 ວ່າດ້ວຍການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຢູ່ແຂວງສະຫວັນນະເຂດ.

## ເຈົ້າແຂວງ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ເພື່ອຮັບປະກັນໃຫ້ການກຳນົດ, ຈັດສັນແບ່ງເຂດ ແລະ ແບ່ງຄວາມຮັບຜິດຊອບ ຂອງພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແນໃສ່ເຮັດໃຫ້ມີການປົກປັກຮັກສາ, ການຄຸ້ມຄອງ, ການພັດທະນາ ແລະ ການຫັນປ່ຽນປະເພດທີ່ດິນກະສິກຳ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ ຮັບປະກັນການນຳໃຊ້ທີ່ດິນກະສິກຳ ໃນການຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຕາມທິດກະສິກຳສະອາດ, ສີຂຽວ-ຍືນຍົງ, ປະກອບສ່ວນຢ່າງແຂງແຮງ ເຂົ້າໃນການພັດທະນາຂອງແຂວງ.

**ມາດຕາ 2 ຄວາມໝາຍ ກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ**

ໝາຍເຖິງການກຳນົດ ແລະ ປັກຫຼັກໝາຍທີ່ດິນກະສິກຳເຂດຜະລິດສະບຽງອາຫານ, ເຂດຜະລິດເປັນສິນຄ້າ ວາງແຜນ ແລະ ຄຸ້ມຄອງການນຳໃຊ້ ໃຫ້ສອດຄ່ອງກັບທີ່ຕັ້ງ, ສອດຄ່ອງກັບການຜະລິດກະສິກຳ ແລະ ແຜນແມ່ບົດຈັດສັນທີ່ດິນຂອງແຂວງ ບົນພື້ນຖານຄວາມເປັນເອກະພາບ ກັບບັນດາພະແນກການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຮັບປະກັນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ສາມາດຕອບສະໜອງ ໃຫ້ແກ່ການຜະລິດສະບຽງອາຫານ ແລະ ການຜະລິດກະສິກຳເປັນສິນຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

**1. ທີ່ດິນກະສິກຳ** ໝາຍເຖິງ ທີ່ດິນກຳນົດໄວ້ ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ, ປະມົງ, ຊົນລະປະທານ ແລະ ການຄົ້ນຄວ້າທົດລອງດ້ານກະສິກຳ;

- ທີ່ດິນສຳລັບການປູກຝັງ ໝາຍເຖິງ ດິນທີ່ນຳໃຊ້ເຂົ້າໃນການປູກເຂົ້າ, ປູກພືດສະບຽງອາຫານ-ສິນຄ້າ, ປູກພືດອຸດສາຫະກຳ, ປູກໄມ້ໃຫ້ໝາກ, ປູກໄມ້ອຸດສາຫະກຳ ແລະ ອື່ນໆ;
- ທີ່ດິນສຳລັບການລ້ຽງສັດ ໝາຍເຖິງ ດິນທີ່ນຳໃຊ້ເປັນ ທົ່ງຫຍ້າລ້ຽງສັດ, ຟາມລ້ຽງສັດ, ໜອງເພື່ອລ້ຽງປາ-ສັດນ້ຳ ແລະ ອື່ນໆ;
- ທີ່ດິນສຳລັບການຄົ້ນຄວ້າທົດລອງດ້ານກະສິກຳ ໝາຍເຖິງ ດິນທີ່ນຳໃຊ້ໃນ ການຄົ້ນຄວ້າທົດລອງດ້ານກະສິກຳ ຢູ່ພາຍໃນສູນ-ສະຖານີບໍລິການເຕັກນິກກະສິກຳ;
- ທີ່ດິນສຳລັບການຊົນລະປະທານໝາຍເຖິງດິນທີ່ ນຳໃຊ້ໃນລະບົບຊົນລະປະທານມີ: ຄອງຊົນລະປະທານ, ຫ້ອງານປະເພດໃດປັ່ນໄຟຟ້າ-ການສູບນ້ຳຮັບໃຊ້ການຜະລິດ, ບຶງ, ໜອງ, ອ່າງເກັບນ້ຳ, ຝາຍນ້ຳລົ້ນ ແລະ ເຂື່ອນ ສຳລັບການກະສິກຳ.

**2. ການຄຸ້ມຄອງທີ່ດິນກະສິກຳ** ໝາຍເຖິງ ຂະບວນການທີ່ເຮັດໃຫ້ ທີ່ດິນກະສິກຳໄດ້ມີການຈັດສັນ ແລະ ຮັບການປົກປັກຮັກສາ ໃຫ້ຖືກຕ້ອງຕາມເປົ້າໝາຍ ດ້ວຍການເກັບກຳຂໍ້ມູນທີ່ດິນ, ວາງລະບຽບການ, ກຳນົດມາດຕະການ ໃນການຄຸ້ມຄອງ, ກວດກາ, ປະເມີນຜົນກະທົບດ້ານທຳມະຊາດ, ສິ່ງແວດລ້ອມ ແລະ ສັງຄົມ ຢ່າງມີປະສິດທິຜົນ;

**3. ການນຳໃຊ້ທີ່ດິນກະສິກຳ** ໝາຍເຖິງ ການຊົມໃຊ້ ທີ່ດິນກະສິກຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຊິ່ງໃນນັ້ນແມ່ນລວມທັງການພັດທະນາ ທີ່ໄດ້ຮັບໝາກຜົນຈາກທີ່ດິນກະສິກຳແຕ່ລະປະເພດທີ່ໄດ້ຮັບອະນຸຍາດ ຕາມການຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນກະສິກຳ ເຂົ້າໃນເປົ້າໝາຍໃຫ້ຖືກຕ້ອງຕາມລະບຽບກົດຫມາຍ ແລະ ເຕັກນິກວິຊາການ;

**4. ການພັດທະນາທີ່ດິນກະສິກຳ** ໝາຍເຖິງ ການປັບປຸງທີ່ດິນກະສິກຳ ດ້ວຍການລົງທຶນການກໍ່ສ້າງພື້ນຖານໂຄງລ່າງ, ແຮງງານ, ວັດຖຸ, ທຶນຮອນ, ເຕັກນິກວິຊາການ, ເພື່ອເຮັດໃຫ້ດິນມີຄຸນນະພາບດີ, ແທດເໝາະກັບການຜະລິດກະສິກຳ ສາມາດເພີ່ມປະລິມານ ແລະ ຄຸນນະພາບຂອງຜົນຜະລິດໃຫ້ສູງຂຶ້ນ;

**5. ປຶ້ມສຳມະໂນທີ່ດິນກະສິກຳ** ໝາຍເຖິງ ເອກະສານເກັບກຳສະຖິຕິຕອນດິນກະສິກຳປະເພດຕ່າງໆເຂົ້າໃນປຶ້ມສຳມະໂນຄົວ ແລະ ຖານຂໍ້ມູນສຳມະໂນທີ່ດິນ ເພື່ອຕິດຕາມສະພາບການເຄື່ອນໄຫວ, ປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ແລະ ເປັນຂໍ້ມູນພື້ນຖານໃນການຂຶ້ນທະບຽນ, ເສຍຄ່າທຳນຽມນຳໃຊ້ທີ່ດິນຕາມກົດໝາຍ ແລະ ອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ;

**6. ໃບຢັ້ງຢືນນຳໃຊ້ທີ່ດິນກະສິກຳ** ໝາຍເຖິງ ເອກະສານຢັ້ງຢືນຄວາມຖືກຕ້ອງ ຂອງການນຳໃຊ້ທີ່ດິນກະສິກຳ, ການປະຕິບັດພັນທະອາກອນ,ການປົກປັກຮັກສາ ແລະ ພັດທະນາ ທີ່ດິນກະສິກຳ ໃຫ້ແກ່ບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ໂດຍແມ່ນຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ນະຄອນ ເປັນຜູ້ອອກໃຫ້;

**7. ໃບຢັ້ງຢືນການພັດທະນາທີ່ດິນກະສິກຳ** ໝາຍເຖິງ ເອກະສານຕິດຕາມ, ກວດກາການນຳໃຊ້ທີ່ດິນກະ ສິກຳ ຢ່າງຖືກຕ້ອງຕາມເປົ້າໝາຍ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີ ເປັນຕົ້ນແມ່ນການລົງທຶນໃນການຜະລິດກະສິກຳ ຕາມທິດກະສິກຳສະອາດ, ສີຂຽວ ຍືນຍົງ;

**8. ການຜະລິດສະບຽງອາຫານ** ໝາຍເຖິງ ການຜະລິດເພື່ອບໍລິໂພກ ພາຍໃນຄອບຄົວ ແລະ ມີສ່ວນເຫຼືອແຮໄວ້, ນຳໄປຂາຍ ເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າປະຈຳວັນ;

**9. ການຜະລິດເປັນສິນຄ້າ** ໝາຍເຖິງ ການຜະລິດເພື່ອຂາຍ ໂດຍນຳໃຊ້ເຕັກນິກວິຊາການໃໝ່ທີ່ທັນສະ ໄໝ, ມີການວາງແຜນການຜະລິດ, ຕິດພັນກັບການຕະຫຼາດ ຜະລິດຕາມມາດຖານກຳນົດ, ມີສັນຍາແນ່ນອນ, ມີແຫຼ່ງທຶນທີ່ຮັບປະກັນ;

**10. ດິນທີ່ມີຄວາມອຸດົມສົມບູນ** ໝາຍເຖິງດິນທີ່ມີຄຸນສົມບັດທາງດ້ານເຄມີ, ຟີຊິກ ແລະ ຊີວະວິທະຍາ ທີ່ພຽງພໍ ສຳລັບການຈະເລີນເຕີບໂຕຂອງພືດ;

**11. ດິນເຊື່ອມໂຊມ** ໝາຍເຖິງ ດິນທີ່ຢູ່ໃນສະພາບທີ່ບໍ່ເອື້ອອຳນວຍຕໍ່ການຜະລິດກະສິກຳ ເນື່ອງຈາກຄຸນສົມບັດຕ່າງໆຂອງດິນບໍ່ເໝາະສົມຕໍ່ການຈະເລີນເຕີບໂຕຂອງພືດ;

**12. ການປັບປຸງດິນກະສິກຳ** ໝາຍເຖິງ ເຮັດໃຫ້ດິນມີຄວາມອຸດົມສົມບູນ ສາມາດນຳໃຊ້ຢ່າງຍາວນານ ແລະ ມີປະສິດທິຜົນ ໃນການປູກຝັງ, ລ້ຽງສັດ ດ້ວຍການນຳໃຊ້ຝຸ່ນຕ່າງໆ ເຊັ່ນ: ຝຸ່ນຄອກ, ຝຸ່ນບົ່ມ, ຝຸ່ນພືດສົດ, ຂີ້ເຈຍ, ດິນກົ້ນໜອງ, ຖ່ານຕົມ ແລະ ຫີນກາວ.

## ມາດຕາ 4 ນະໂຍບາຍຂອງລັດ ໃນການຄຸ້ມຄອງ ແລະ ນຳໃຊ້ ທີ່ດິນກະສິກຳ

1. ລັດ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ໃຫ້ມີປະສິດທິຜົນ ດ້ວຍການວາງນະໂຍບາຍ, ວິທີການ ແລະ ມາດຕະການຕ່າງໆ ເຊັ່ນ: ການສຶກສາອົບຮົມ, ການສົ່ງເສີມດ້ານທຶນຮອນ, ແຮງງານ, ວັດຖຸ, ເຕັກນິກ-ເຕັກໂນໂລຊີ, ການກໍ່ສ້າງໂຄງລ່າງພື້ນຖານ ແລະ ການຄຸ້ມຄອງບໍລິຫານທີ່ດີ;

2. ລັດ ຫຼຸດຜ່ອນ ຫຼື ຍົກເວັ້ນຄ່າທຳນຽມ ແລະ ຄ່າບໍລິການສຳຫຼວດ-ວັດແທກ ຂຶ້ນທະບຽນອອກໃບຢັ້ງຢືນນຳໃຊ້ທີ່ດິນກະສິກຳ ແລະ ການເສຍຄ່າທຳນຽມນຳໃຊ້ທີ່ດິນນາ ໃຫ້ແກ່ຄອບຄົວທຸກຍາກ ແລະ ໃນເຂດບູລິມະສິດກະສິກຳ ລວມທັງເຂດທີ່ໄດ້ປະກາດເປັນໄພພິບັດ;

3. ລັດ ຊຸກຍູ້, ສົ່ງເສີມ ໃຫ້ມີການພັດທະນາຊັບພະຍາກອນມະນຸດ, ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ພັດທະນາ ພູມປັນຍາຂອງປະຊາຊົນບັນດາເຜົ່າ ເຂົ້າໃນການຄຸ້ມຄອງບໍລິຫານ, ປົກປັກຮັກສາ, ນຳໃຊ້, ພັດທະນາ ແລະ ຟື້ນຟູທີ່ດິນກະສິກຳໃຫ້ມີຄຸນນະພາບດີຂຶ້ນ;

4. ລັດ ສົ່ງເສີມສິດເປັນເຈົ້າ ແລະ ບົດບາດຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ ເຂົ້າຮ່ວມໃນການຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ພົວພັນກັບທີ່ດິນກະສິກຳ.

## ມາດຕາ 5 ຫຼັກການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ

ວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນນຳໃຊ້ທີ່ດິນ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນຂອງແຂວງ, ລວມທັງ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະ ຫງົບຂອງແຂວງ;
2. ຄຸ້ມຄອງຢ່າງເປັນເອກະພາບ ແລະ ລວມສູນ ໃນຂອບເຂດທົ່ວແຂວງ;
3. ຮັບປະກັນການຮັກສາເນື້ອທີ່ດິນກະສິກຳ ຕາມແຜນແມ່ບົດກຳນົດແບ່ງເຂດຈັດສັນທີ່ດິນ ເພື່ອຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ, ເນື້ອທີ່ດິນ ທີ່ຈະນຳໃຊ້ ແລະ ພັດທະນາ ໃນສາມສິບສ່ວນຮ້ອຍ ບໍ່ໃຫ້ຫຼຸດ ຂອງເນື້ອທີ່ທົ່ວແຂວງ;
4. ຮັບປະກັນກົງຈັກການຈັດຕັ້ງ ແລະ ການຄຸ້ມຄອງ-ບໍລິຫານທີ່ດິນ ໃຫ້ສອດຄ່ອງກັບ ສະພາບໃນ ແຕ່ລະໄລຍະ, ມີການແບ່ງຂັ້ນຄຸ້ມຄອງ ລະຫວ່າງ ຂະແໜງການຂັ້ນແຂວງ, ເມືອງ, ນະຄອນ ແລະ ບ້ານ ໃຫ້ຈະແຈ້ງ;
5. ຮັບປະກັນການມີສ່ວນຮ່ວມຂອງ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ປະຊາຊົນ, ສື່ມວນຊົນ ແລະ ອົງການຈັດຕັ້ງສາກົນ ທີ່ເຄື່ອນໄຫວກ່ຽວກັບວຽກງານທີ່ດິນກະສິກຳ, ໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ພົວພັນກັບທີ່ດິນກະສິກຳ.

## ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ມີຂອບເຂດການນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຂອງແຂວງສະຫວັນນະເຂດ.

## ໝວດທີ 2
## ການກຳນົດຂອບເຂດເນື້ອທີ່ດິນກະສິກຳ

### ມາດຕາ 7 ການກຳນົດຂອບເຂດເນື້ອທີ່ດິນກະສິກຳ

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນໃຈກາງໃນການປະສານສົມທົບກັບບັນດາພະແນກການ, ກົມກອງ, ເມືອງ, ນະຄອນ, ບ້ານທີ່ກ່ຽວຂ້ອງ ເພື່ອສຳຫຼວດ, ຈັດສັນ, ກຳນົດແບ່ງເຂດ ແລະ ປັກຫຼັກໝາຍ ທີ່ດິນກະສິກຳ ໃຫ້ຊັດເຈນ ເພື່ອວາງແຜນຄຸ້ມຄອງ ແລະ ນຳໃຊ້ຢ່າງເໝາະສົມ ຕາມແຜນແມ່ບົດຈັດສັນທີ່ດິນກະສິກຳຂອງແຂວງ ໃນ ສີ່ ປະເພດ ດັ່ງນີ້:

| ລ/ດ | ປະເພດການນຳໃຊ້ທີ່ດິນ | ເນື້ອທີ່ (ເຮັກຕາ) | ສ່ວນຮ້ອຍ (%) |
|---|---|---|---|
| 1 | ກຳນົດເຂດທີ່ປູກເຂົ້ານາ | 212,000 | 32 |
| 2 | ກຳນົດເຂດປູກພືດລົ້ມລຸກ/ພືດອາຍຸສັ້ນ | 263,385 | 40 |
| 3 | ກຳນົດເຂດປູກໄມ້ໃຫ້ໝາກ/ພືດອາຍຸຍາວ | 80,500 | 13 |
| 4 | ກຳນົດເຂດທົ່ງຫຍ້າເພື່ອການລ້ຽງສັດໃຫຍ່ | 95,500 | 15 |
| **ລວມ** | | **651,385** | **100** |

### ມາດຕາ 8 ຂອບເຂດເນື້ອທີ່ດິນກະສິກຳທີ່ສະຫງວນໄວ້

ເນື້ອທີ່ດິນກະສິກຳໃນ ສີ່ ປະເພດທີ່ສະຫງວນໄວ້ ໂດຍສະເພາະເນື້ອທີ່ນອນໃນເຂດມີລະບົບຊົນລະປະທານ, ເຂດຈຸດສຸມຜະລິດສະບຽງອາຫານ ແລະ ເຂດຜະລິດເປັນສິນຄ້າຂອງແຂວງມີທັງໝົດ 393,885 ເຮັກຕາມີ:

| ລ/ດ | ປະເພດທີ່ດິນ | ຫົວໜ່ວຍ | ກະສິກຳທັງໝົດ | ເຂດສະຫງວນຜະລິດສະບຽງອາຫານ ແລະ ຜະລິດສິນຄ້າ |
|---|---|---|---|---|
| 1 | ເນື້ອທີ່ປູກເຂົ້າ | ເຮັກຕາ | 212,000 | 150,000 |
| 2 | ເນື້ອທີ່ປູກພືດອາຍຸສັ້ນ | ເຮັກຕາ | 263,385 | 143,385 |
| 3 | ເນື້ອທີ່ປູກພືດອາຍຸຍາວ | ເຮັກຕາ | 80,500 | 45,000 |
| 4 | ທົ່ງຫຍ້າທຳມະຊາດລ້ຽງສັດ | ເຮັກຕາ | 95,500 | 55,500 |
| | **ລວມ** | | **651,385** | **393,885** |

ທີ່ດິນກະສິກຳ ບໍ່ອະນຸຍາດໃຫ້ຫັນປ່ຽນ ແມ່ນທີ່ດິນໃນຂອບເຂດ ທີ່ມີລັກສະນະພິເສດ ສຳຄັນເປັນຕົ້ນ: ທີ່ດິນເຂດມີໂຄງລ່າງລະບົບຊົນລະປະທານ, ທີ່ດິນທີ່ມີລັກສະນະສະເພາະສຳລັບການປູກເຂົ້າ ແລະ ພືດ, ທີ່ດິນທີ່ມີລັກສະນະສະເພາະສຳລັບການລ້ຽງສັດ ແລະ ປະມົງ, ທີ່ດິນສຳລັບການຄົ້ນຄວ້າທົດລອງກະສິກຳ ແລະ ດິນນາໃນສາມປະເພດປ່າ ທີ່ໄດ້ກຳນົດໄວ້ໃນຂໍ້ຫ້າມຂອງກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 3
## ການຫັນປ່ຽນທີ່ດິນກະສິກຳ

### ມາດຕາ 9 ການຫັນປ່ຽນທີ່ດິນກະສິກຳ

ການຫັນປ່ຽນທີ່ດິນກະສິກຳ ໄປເປັນທີ່ດິນປະເພດອື່ນ ຈະດຳເນີນໄດ້ກໍ່ຕໍ່ເມື່ອ ຫາກເຫັນວ່າມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາ

ຊົນ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ,ສັງຄົມ ແລະ ທຳມະຊາດ;

ຜູ້ທີ່ໄດ້ຮັບອະນຸຍາດຫັນປ່ຽນປະເພດທີ່ດິນ ຮັບຜິດຊອບຈ່າຍຄ່າບໍລິການທາງດ້ານວິຊາການ, ຄ່າບູລະນະ ຟື້ນຟູ, ຄ່າທຳນຽມການຫັນປ່ຽນຕາມລະບຽບກົດໝາຍ.

**ມາດຕາ 10 ອົງການຮັບຜິດຊອບ ໃນການຫັນປ່ຽນປະເພດທີ່ດິນກະສິກຳ**

1. ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຜູ້ຮັບຜິດຊອບໂດຍກົງ ພາຍຫຼັງທີ່ໄດ້ຮັບຄຳຮ້ອງຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພັກ-ລັດ ຂັ້ນແຂວງ, ກົມກອງ, ເມືອງ-ນະຄອນ, ບ້ານ, ບັນດາຫົວໜ່ວຍທຸລະກິດ ຕ່າງໆ ທີ່ມີຈຸດປະສົງ ໃນການຫັນປ່ຽນປະເພດດິນກະສິກຳ ໄປເປັນປະເພດດິນອື່ນ, ຕ້ອງປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບການຫັນປ່ຽນ ເພື່ອສະເໜີຂັ້ນເທິງພິຈາລະນາ ຕາມກົດໝາຍທີ່ ກ່ຽວຂ້ອງກຳນົດໄວ້;
2. ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ເປັນເຈົ້າການປະສານສົມທົບ ກັບອົງການປົກຄອງ ທ້ອງຖິ່ນທີ່ກ່ຽວຂ້ອງລົງກວດກາ ເກັບກຳຂໍ້ມູນຕອນດິນ, ເປົ້າໝາຍການຫັນປ່ຽນເພື່ອມີຄຳເຫັນທາງດ້ານ ວິຊາການ ໃຫ້ພະແນກພະແນກກະສິກຳ ແລະ ປ່າໄມ້ແຂວງ ສະເໜີຕໍ່ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຢັ້ງຢືນຄວາມຖືກຕ້ອງ.

**ມາດຕາ 11 ຂັ້ນຕອນ ແລະ ວິທີການຢັ້ງຢືນຕອນດິນກະສິກຳ**

1. ການສຳຫຼວດ-ຈັດສັນ ແລະ ວາງແຜນການນຳໃຊ້ທີ່ດິນກະສິກຳ ແບບມີສ່ວນຮ່ວມຂັ້ນບ້ານ;

2. ຂຶ້ນສຳມະໂນທີ່ດິນກະສິກຳ ເກັບກຳສະຖິຕິຕອນດິນກະສິກຳປະເພດຕ່າງໆ ເຂົ້າໃນປື້ມສຳມະໂນທີ່ດິນ ກະສິກຳ ເພື່ອຕິດຕາມການເຄື່ອນໄຫວ ແລະ ປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນກະສິກຳ;

3. ໃບຢັ້ງຢືນນຳໃຊ້ທີ່ດິນກະສິກຳ ເພື່ອຢັ້ງຢືນການນຳໃຊ້ດິນໃນການຜະລິດກະສິກຳ ໃນພື້ນທີ່ດິນ ກະສິກຳ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ໂດຍແມ່ນຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ນະຄອນ ອອກໃຫ້;

4. ໃບຢັ້ງຢືນການພັດທະນາທີ່ດິນກະສິກຳ ແມ່ນການຕິດຕາມ, ກວດກາການນຳໃຊ້ທີ່ດິນກະສິກຳ ຢ່າງ ຖືກຕ້ອງຕາມເປົ້າໝາຍ ການລົງທຶນໃນການຜະລິດກະສິກຳ ຕາມທິດ ກະສິກຳສະອາດ, ສີຂຽວ ຍືນຍົງ ມີຜົນ ກະທົບທາງບວກຕໍ່ດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ, ຕາມເງື່ອນໄຂ ແລະ ລະບຽບການ ຂອງຂະແ ໜງກະສິກຳ ແລະ ປ່າໄມ້ ກຳນົດໄວ້ ແຕ່ລະໄລຍະ ໂດຍແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງອອກໃຫ້;

5. ສຳລັບການອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ມີກຳນົດເວລາໃນການດຳເນີນເອກະສານ ຊາວ ວັນ ທາງລັດຖະການ.

**ມາດຕາ 12 ການປະກອບເອກະສານການນປ່ຽນທີ່ດິນກະສິກຳ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງລັດ ແລະ ການຈັດຕັ້ງຕ່າງໆ ທີ່ມີຈຸດປະສົງຢາກຫັນປ່ຽນທີ່ດິນ ກະສິກຳ ໄປເປັນດິນປະເພດອື່ນ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບສະເໜີ;
2. ສຳເນົາ ໃບຕາດິນ, ໃບແຜນທີ່ດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ;
3. ໃບເສຍຄ່າອາກອນທີ່ດິນ;
4. ສຳເນົາສຳມະໂນຄົວ, ບັດປະຈຳຕົວ, ໃບຢັ້ງຢືນທີ່ຢູ່ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ;
5. ສຳເນົາໃບທະບຽນວິສາຫະກິດ,ໃບທະບຽນອາກອນ,ໃບອະນຸຍາດທຸລະກິດກະສິກຳ ແລະ ປ່າໄມ້, ບົດວິພາກເສດຖະກິດ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 13 ການເກັບຄ່າບໍລິການ**

1. ການເກັບຄ່າບໍລິການ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງໃຫ້ປະຕິບັດດັ່ງນີ້:

| ລດ | ເນື້ອໃນເອກະສານ | ລາຄາຕໍ່ຫົວໜ່ວຍ | ໝາຍເຫດ |
|---|---|---|---|
| 1 | ອອກປຶ້ມຕິດຕາມການນໍາໃຊ້ທີ່ດິນກະສິກໍາ | 100,000 ກີບຕໍ່ຫົວ | |
| 2 | ອອກໃບຢັ້ງຢືນການນໍາໃຊ້ທີ່ດິນກະສິກໍາ | 50,000 ກີບຕໍ່ໃບຕໍ່ຕອນດິນ | |
| 3 | ອອກໃບຢັ້ງຢືນການພັດທະນາທີ່ດິນກະສິກໍາ | 50,000 ກີບຕໍ່ໃບຕໍ່ຕອນດິນ | |
| 4 | ອອກໃບອະນຸຍາດການຫັນປ່ຽນທີ່ດິນກະສິກໍາ ເປັນດິນປຸກສ້າງບ່ອນຢູ່ອາໃສ ສໍາລັບຄອບຄົວ | 200 ກີບຕໍ່ຕາແມັດ | |
| 5 | ອອກໃບອະນຸຍາດການຫັນປ່ຽນທີ່ດິນກະສິກໍາເປັນ ດິນປຸກສ້າງເພື່ອການຄ້າ, ການບໍລິການ, ການທ່ອງທ່ຽວ, ໂຮງງານອຸດສາຫະກໍາການຂຸດຄົ້ນບໍ່ແຮ່...ມີດັ່ງນີ້: | | |
| 5.1 | ເຂດຕົວເມືອງ | 500 ກີບຕໍ່ຕາແມັດ | |
| 5.2 | ເຂດຊານເມືອງ | 400 ກີບຕໍ່ຕາແມັດ | |
| 5.3 | ເຂດຊົນນະບົດ | 300 ກີບຕໍ່ຕາແມັດ | |
| 6 | ຄ່າວັດແທກດິນກະສິກໍາ ມີດັ່ງນີ້: | | |
| 6.1 | ເນື້ອທີ່ດິນກະສິກໍາບໍ່ເກີນ 5 ເຮັກຕາ | 100,000 ກີບຕໍ່ຕອນ | |
| 6.2 | ເນື້ອທີ່ດິນກະສິກໍາແຕ່ 5,1 ຫາ 10 ເຮັກຕາ | 200,000 ກີບຕໍ່ຕອນ | |
| 6.3 | ເນື້ອທີ່ດິນກະສິກໍາແຕ່ 10 ເຮັກຕາຂຶ້ນໄປ | 400,000 ກີບຕໍ່ຕອນ | |

2. ຄ່າທໍານຽມ ແມ່ນໃຫ້ປະຕິບັດຕາມ ລັດຖະບັນຍັດປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

3. ເງິນບ້ວງລາຍຮັບ ຄ່າທໍານຽມທັງໝົດ ແມ່ນມອບເຂົ້າງົບປະມານ. ສ່ວນບ້ວງລາຍຮັບຄ່າບໍລິການ ແມ່ນໃຫ້ນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານດັ່ງກ່າວ ຕາມການກໍານົດໃນຂໍ້ຕົກລົງຂອງກະຊວງການເງິນ ເລກທີ 0200/ກງ ລົງວັນທີ 25 ມັງກອນ 2023 ວາງອອກ.

## ໝວດທີ 4
## ສິດ ແລະ ພັນທະຂອງຜູ້ນໍາໃຊ້ທີ່ດິນກະສິກໍາ

**ມາດຕາ 14 ສິດຂອງຜູ້ນໍາໃຊ້ທີ່ດິນກະສິກໍາ**

1. ນໍາໃຊ້ທີ່ດິນກະສິກໍາ ທີ່ເປັນສິດນໍາໃຊ້ທີ່ດິນຂອງຕົນ ຫຼື ໄດ້ຮັບອະນຸຍາດໃຫ້ນໍາໃຊ້ຕາມກົດໝາຍ;
2. ໄດ້ຮັບໃບຢັ້ງຢືນການຄຸ້ມຄອງ ແລະ ນໍາໃຊ້ ທີ່ດິນກະສິກໍາ ຖືກຕ້ອງຕາມກົດໝາຍ;
3. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 15 ພັນທະຂອງຜູ້ນໍາໃຊ້ທີ່ດິນກະສິກໍາ**

1. ນໍາໃຊ້ທີ່ດິນກະສິກໍາໃຫ້ຖືກຕ້ອງຕາມເປົ້າໝາຍ, ຕໍ່ເນື່ອງ, ບໍ່ປະໃຫ້ຮົກເຮື້ອ, ເປົ່າຫວ່າງຕໍ່ເນື່ອງຫຼາຍປີ;
2. ປົກປັກຮັກສາທີ່ດິນກະສິກໍາ ໃຫ້ມີຄວາມອຸດົມສົມບູນ ແລະ ເໝາະສົມສໍາລັບການຜະລິດກະສິກໍາ;
3. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
4. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ອົງການຄຸ້ມຄອງ ແລະ ນໍາໃຊ້ທີ່ດິນກະສິກໍາ

**ມາດຕາ 16 ອົງການຄຸ້ມຄອງ ແລະ ນໍາໃຊ້ທີ່ດິນກະສິກໍາ**

ອົງການຄຸ້ມຄອງ ແລະ ນຳໃຊ້ ທີ່ດິນກະສິກຳ ປະກອບມີ:

1) ຂັ້ນແຂວງ: ພະແນກກະສິກຳ ແລະ ປ່າໄມ້ ( ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ );
2) ຂັ້ນເມືອງ/ນະຄອນ: ຫ້ອງການກະສິກຳ ແລະ ປ່າໄມ້;
3) ຂັ້ນບ້ານ: ໜ່ວຍງານເສດຖະກິດ ຫຼື ຜູ້ທີ່ຖືກແຕ່ງຕັ້ງຮັບຜິດຊອບວຽກທີ່ດິນກະສິກຳຂອງບ້ານ.

**ມາດຕາ 17 ສິດ, ໜ້າທີ່ຂອງອົງການຄຸ້ມຄອງ ແລະ ນຳໃຊ້ ທີ່ດິນກະສິກຳ**

**1. ສິດ, ໜ້າທີ່ຂອງອົງການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳຂັ້ນແຂວງ ມີດັ່ງນີ້:**

1) ເປັນຜູ້ຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ທີ່ດິນກະສິກຳ ໃນທົ່ວແຂວງ ໃຫ້ຖືກຕ້ອງຕາມເປົ້າໝາຍ;

2) ເປັນເຈົ້າການ ປະສານສົມທົບ ກັບບັນດາພະແນກການ ແລະ ເມືອງ, ນະຄອນ ທີ່ກ່ຽວຂ້ອງ ເພື່ອລົງສຳຫຼວດຈັດສັນກຳນົດແບ່ງເຂດ, ອອກໃບຢັ້ງຢືນພັດທະນາທີ່ດິນກະສິກຳ ແລະ ນຳພາປັກຫຼັກໝາຍທີ່ດິນກະສິກຳ ໃນທົ່ວແຂວງ;

3) ເຂົ້າຮ່ວມຄົ້ນຄວ້າ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນບົດວິພາກເສດຖະກິດ, ການປະເມີນຜົນການກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ ພ້ອມທັງຕິດຕາມກວດກາ ການນຳໃຊ້ທີ່ດິນກະສິກຳ ຂອງນັກລົງທຶນ ແລະ ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງສອດຄ່ອງຕາມສັນຍາ ແລະ ກົດໝາຍ;

4) ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຜູ້ຮັບຜິດຊອບໂດຍກົງ ໃນການສັງລວມຂໍ້ມູນຕ່າງໆ ແລະ ມີຄຳເຫັນທາງດ້ານວິຊາການ ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງ ເພື່ອລາຍງານຕໍ່ອົງການປົກຄອງແຂວງ ນຳສະເໜີຕໍ່ສະພາປະຊາຊົນແຂວງ ເພື່ອພິຈາລະນາຮັບຮອງ;

5) ສະເໜີລາຍງານ ສະພາບການເຄື່ອນໄຫວວຽກງານ ຕໍ່ອົງການປົກຄອງ ແລະ ສະພາປະຊາຊົນແຂວງ ເພື່ອຂໍທິດຊີ້ນຳ ແຕ່ລະໄລຍະ;

6) ໂຄສະນາເຜີຍແຜ່ລະບຽບການກ່ຽວກັບວຽກງານການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

**2. ສິດ, ໜ້າທີ່ຂອງອົງການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳຂັ້ນເມືອງ, ນະຄອນ ມີດັ່ງນີ້:**

1) ປະສານສົມທົບກັບອຳນາດການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນທ້ອງຖິ່ນຕົນ ເພື່ອຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ໃຫ້ຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ;

2) ເປັນເຈົ້າການ ໃນການເຂົ້າຮ່ວມລົງສຳຫຼວດ, ຈັດສັນ, ກຳນົດແບ່ງເຂດ, ປັກຫຼັກໝາຍ ແລະ ຂຶ້ນສຳມະໂນ ທີ່ດິນກະສິກຳ, ອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ໃນເຂດຜະລິດສະບຽງອາຫານ, ເຂດຜະລິດເປັນສິນຄ້າ;

3) ເຂົ້າຮ່ວມ ຄົ້ນຄວ້າກັບພາກສ່ວນທີ່ກ່ຽວຂ້ອງ ໃນການທົບທວນບົດວິພາກເສດຖະກິດ, ການປະເມີນສິ່ງແວດລ້ອມ-ສັງຄົມ ຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ; ພ້ອມຕິດຕາມ ກວດກາການນຳໃຊ້ທີ່ດິນກະສິກຳ ຂອງນັກລົງທຶນ ແລະ ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງສອດຄ່ອງຕາມສັນຍາ ແລະ ກົດໝາຍ;

4) ໂຄສະນາເຜີຍແຜ່ລະບຽບການກ່ຽວກັບວຽກງານການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

5) ສະເໜີລາຍງານ ຕໍ່ການຈັດຕັ້ງທັງສາຍຕັ້ງ ແລະ ສາຍຂວາງຂອງຕົນ ເພື່ອຂໍທິດຊີ້ນຳ ແຕ່ລະໄລຍະ.

**3. ສິດ, ໜ້າທີ່ຂອງໜ່ວຍງານຄຸ້ມຄອງ ແລະ ນຳໃຊ້ ທີ່ດິນກະສິກຳຂັ້ນບ້ານ ມີດັ່ງນີ້:**

1) ໂຄສະນາເຜີຍແຜ່, ຜັນຂະຫຍາຍນະໂຍບາຍ, ລະບຽບການ ແລະ ກົດໝາຍ ກ່ຽວກັບວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ໃນຂອບເຂດບ້ານ;

2) ຊຸກຍູ້ຕິດຕາມ ການນຳໃຊ້ດິນກະສິກຳຂອງຊາວກະສິກອນ ພາຍໃນບ້ານ;

3) ເຂົ້າຮ່ວມ ສຳມະນາຝຶກອົບ ກ່ຽວກັບ ວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

4) ເຂົ້າຮ່ວມ ແກ້ໄຂບັນຫາຂໍ້ຂັດແຍ່ງ ກ່ຽວກັບວຽກງານຄຸ້ມຄອງ ແລະ ນຳໃຊ້ດິນກະສິກຳພາຍໃນບ້ານ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 18 ຂໍ້ຫ້າມສຳລັບ ອົງການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ແລະ ພະນັກງານ

1. ຫ້າມອອກເອກະສານຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ໃນເຂດສະຫງວນແຄມນໍ້າ, ເຂດສະຫງວນລຽບຊາຍແດນລະຫວ່າງຊາດ ແລະ ເຂດສະຫງວນອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

2. ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ກ່ຽວກັບວຽກງານການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

3. ຫ້າມໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ໃຊ້ສິດໜ້າທີ່ເກີນຂອບເຂດ ຫຼື ນຳໃຊ້ວິທີການອື່ນ ທີ່ບໍ່ສອດຄ່ອງຕາມລະບຽບກົດໝາຍ;

4. ຫ້າມປະລະໜ້າທີ່ວຽກງານຄຸ້ມຄອງ ແລະ ນຳໃຊ້ ທີ່ດິນກະສິກຳ ທີ່ການຈັດຕັ້ງຂັ້ນເທິງມອບໝາຍໃຫ້;

5. ຫ້າມປອມແປງເອກະສານ, ດຳເນີນ ຫຼື ເຂົ້າຮ່ວມທຸລະກິດ ກ່ຽວກັບວຽກງານທີ່ດິນກະສິກຳ.

### ມາດຕາ 19 ຂໍ້ຫ້າມສຳລັບ ຜູ້ນຳໃຊ້ດິນກະສິກຳ

ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ບັນດາຫົວໜ່ວຍທຸລະກິດດັ່ງລຸ່ມນີ້:

1. ໃຫ້ສິນບົນ ອົງການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

2. ຫ້າມບຸກຄົນ, ນິຕິບຸກຄົນ ແລະ ບັນດາຫົວໜ່ວຍທຸລະກິດຕ່າງໆ ຖົມດິນ, ຈົກເອົາດິນ ແລະ ອື່ນໆ ທີ່ອາດສ້າງຜົນຜົນກະທົບ ແລະ ເສຍຫາຍ ຕໍ່ດິນກະສິກຳ ໂດຍບໍ່ໄດ້ຮັບອະນຸຍາດ;

3. ນຳໃຊ້ທີ່ດິນກະສິກຳ ບໍ່ຖືກຕ້ອງຕາມເປົ້າໝາຍອື່ນເຊັ່ນ: ຫັນປ່ຽນເປັນດິນປຸກສ້າງ, ດິນອຸດສາຫະກຳ ຫຼື ນຳໃຊ້ເຂົ້າເພື່ອດຳເນີນທຸລະກິດດ້ານ ອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດ;

4. ຫັນປ່ຽນປະເພດເນື້ອທີ່ດິນກະສິກຳ ໃນເຂດຊົນລະປະທານໄປເປັນທີ່ດິນປຸກສ້າງ, ທີ່ດິນອຸດສາຫະກຳ ແລະ ທີ່ດິນປະເພດອື່ນໆ;

5. ຫັນປ່ຽນປະເພດເນື້ອທີ່ດິນກະສິກຳ ທີ່ຢູ່ໃນເຂດທີ່ໄດ້ຖືກກຳນົດໄວ້ແລ້ວ.

## ໝວດທີ 7
## ການກວດກາວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ

### ມາດຕາ 20 ອົງການກວດກາວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ

ອົງການກວດກາວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ປະກອບມີ:

1. ອົງການກວດກາພາຍໃນແມ່ນ ອົງການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;

2. ອົງການກວດກາພາຍນອກແມ່ນ ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຂັ້ນແຂວງ, ອົງການກວດສອບປະຈຳພາກພາງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າແຂວງ ແລະ ສື່ມວນຊົນ.

### ມາດຕາ 21 ເນື້ອໃນ ແລະ ຮູບແບບຂອງການກວດກາ

**1. ເນື້ອໃນຂອງການກວດກາ**

1) ຄວາມຮັບຜິດຊອບ ກ່ຽວຂ້ອງກັບການປະຕິບັດໜ້າທີ່ຂອງອົງການຄຸ້ມຄອງ ແລະ ພະນັກງານທີ່ເຄື່ອນໄຫວວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

2) ການຈັດຕັ້ງປະຕິບັດບັນດານິຕິກຳກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ;

3) ການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການ ຕໍ່ຜູ້ທີ່ລະເມີດກົດໝາຍ ແລະ ນິຕິກຳກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ.

**2. ຮູບແບບຂອງການກວດກາ**

ການກວດກາ ໃຫ້ກວດທັງເອກະສານ ແລະ ສະຖານທີ່ປະຕິບັດງານມີ ສາມ ຮູບແບບຄື:

1) ແບບປົກກະຕິ ແມ່ນການກວດກາທີ່ມີລັກສະນະເປັນປະຈໍາ ແລະ ມີກໍານົດເວລາທີ່ແນ່ ນອນ ຊຶ່ງປະຕິບັດຢ່າງໜ້ອຍ ສອງຄັ້ງຕໍ່ປີ;

2) ແບບແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ຊົ່ວໂມງ;

3) ແບບກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈໍາເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ; ການກວດກາ ໃຫ້ກວດທັງເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 22 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ທີ່ດິນກະສິກໍາຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍຕ່າງໆ ຕາມຄວາມເໝາະສົມ.

### ມາດຕາ 23 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ;

ບຸກຄົນໃດ ຫາກໄດ້ກະທໍາ ຫຼື ສົມຮູ້ຮ່ວມຄິດ ໃນການປອມແປງໃບຢັ້ງຢືນການນໍາໃຊ້ທີ່ດິນກະສິກໍາ ແລະ ໃບຢັ້ງຢືນການພັດທະນາທີ່ດິນກະສິກໍາ ຈະຖືກປັບໄໝ ຫຼື ຖືກດໍາເນີນຄະດີ ຕາມກໍລະນີ ດັ່ງນີ້:

1. ການປ່ຽນເປົ້າໝາຍນໍາໃຊ້ທີ່ດິນນາໄປສູ່ເປົ້າໝາຍອື່ນທີ່ບໍ່ອະນຸຍາດເປັນຕົ້ນ: ອ້ອຍ, ກ້ວຍ, ມັນຕົ້ນ, ໄມ້ໃຫ້ໝາກ, ໄມ້ອຸດສາຫະກໍາ ແລະ ປູກຫຍ້າລ້ຽງສັດ
   - ນໍາໃຊ້ດິນນາ ໄປປູກພືດອາຍຸສັ້ນ — ຄິດໄລ່ 40 ລ້ານກີບຕໍ່ເຮັກຕາ;
   - ນໍາໃຊ້ດິນນາ ໄປປູກພືດອາຍຸຍາວ — ຄິດໄລ່ 60 ລ້ານກີບຕໍ່ເຮັກຕາ;
   - ນໍາໃຊ້ດິນນາ ໄປປູກຫຍ້າລ້ຽງສັດ ແລະ ລ້ຽງສັດ — ຄິດໄລ່ 80 ລ້ານກີບຕໍ່ເຮັກຕາ;
2. ການຫັນປ່ຽນທີ່ດິນກະສິກໍາໄປເປັນທີ່ດິນປະເພດອື່ນ ເພື່ອຮັບໃຊ້ຈຸດປະສົງໃດໜຶ່ງທີ່ມີລັກສະນະຖາວອນ ເປັນຕົ້ນ ຫັນປ່ຽນເປັນທີ່ດິນປຸກສ້າງ, ຄົມມະນາຄົມ, ອຸດສາຫະກໍາ, ວັດທະນະທໍາ, ແລະ ດິນອື່ນໆ ໂດຍກໍານົດເປັນ ສາມ ເຂດດັ່ງນີ້:
   - ເຂດຊົນນະບົດ — ຄິດໄລ່ 6,000 ກີບຕໍ່ຕາແມັດ;
   - ເຂດຊານເມືອງ — ຄິດໄລ່ 8,000 ກີບຕໍ່ຕາແມັດ;
   - ເຂດຕົວເມືອງ — ຄິດໄລ່ 10,000 ກີບຕໍ່ຕາແມັດ;

ສໍາລັບເງິນປັບໄໝດັ່ງກ່າວ ຫ້າສິບສ່ວນຮ້ອຍ ມອບເຂົ້າງົບປະມານຕາມລະບຽບການເງິນ; ຊາວສ່ວນຮ້ອຍມອບໃຫ້ບ້ານ, ສິບຫ້າສ່ວນຮ້ອຍມອບໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ນະຄອນ ແລະ ສິບຫ້າສ່ວນຮ້ອຍ ມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ ນໍາໃຊ້ເຂົ້າໃນການເຄື່ອນໄຫວຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້.

## ໝວດທີ 9

## ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຂະແໜງຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ນະຄອນ ແລະ ອົງການປົກຄອງທ້ອງຖິ່ນ ເຜີຍແຜ່ນິຕິກຳ ກ່ຽວກັບຂໍ້ຕົກລົງສະບັບນີ້ ໃຫ້ປະຊາຊົນໄດ້ຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ;

ປະສານສົມທົບກັບ ບັນດາພະແນກການ, ອົງການທຽບເທົ່າ, ຫ້ອງການຂັ້ນເມືອງ, ນະຄອນ, ອຳນາດການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ ນັບແຕ່ວັນໄດ້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ບຸນໂຈມ ອຸບົນປະເສີດ